ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື
ພະແນກອຸດສາຫະກຳ ແລະ ການຄ້າ
(ຄະນະກຳມະການປະມູນຂາຍໄມ້ຍຶດຂັ້ນແຂວງ)

ເລກທີ.797../ອຄ.ອປ
ອັດຕະປື, ວັນທີ20..08..2018

## ແຈ້ງການປະມູນ

ເຖິງ : ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ໄມ້ສຳເລັດຮູບ ທົ່ວປະເທດ.
ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ ບ້ວງໄມ້ຍຶດຂອງແຂວງ ຈຳນວນ 06 ບັນຊີ ເທົ່າກັບ 3.148 ຕົບ/ແຜ່ນ ບໍລິມາດ : 102,559 ມ3 ( ໜຶ່ງຮ້ອຍສອງຈຸດຫ້າຫ້າເກົ້າແມັດກ້ອນ ).

- ອີງຕາມ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມຂໍ້ຕົກລົງ ເລກທີ 0035/ອຄ.ຈພງ, ວັນທີ 06 ມັງກອນ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 1258/ຈຂ.ອປ, ລົງວັນທີ 19/12/2016. ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະມູນຂາຍໄມ້ ສົກປີ 2016 - 2017.
- ອີງຕາມ ຄຳສັ່ງແນະນຳເລກທີ 0336/ອຄ.ກຂອ, ວັນທີ 13 ມີນາ 2017 ວ່າດ້ວຍການແນະນຳການຈັດຕັ້ງປະຕິບັດປະມູນຂາຍໄມ້ຍຶດເປັນຂອງລັດ.
- ອີງຕາມ ສະໂນດນຳສົ່ງ ບັນຊີໄມ້ສະໜາມ II ສະບັບເລກທີ 546/ກຸຂ, ລົງວັນທີ 22/06/2018.

ຄະນະກຳມະການປະມູນຂາຍໄມ້ຍຶດຂັ້ນແຂວງ ( ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ໂຮງງານເຟີນີເຈີ ໄມ້ສຳເລັດຮູບ ພາຍໃນແຂວງ ເພື່ອເຂົ້າປະມູນຊື້ - ຂາຍໄມ້ຍຶດຂອງແຂວງອັດຕະປື ເຊິ່ງມີລາຍລະອຽດ ດັ່ງນີ້ :

I. ໄມ້ຍຶດຂອງແຂວງ ທີ່ຈະປະມູນຂາຍ ມີຈຳນວນທັງໝົດ 06 ບັນຊີ ເທົ່າກັບ 3.148 ຕົບ/ແຜ່ນ, ບໍລິມາດ : 102,559 ແມັດກ້ອນ ( ໜຶ່ງຮ້ອຍສອງຈຸດຫ້າຫ້າເກົ້າແມັດກ້ອນ ). ໃນນັ້ນມີ :

- ໄມ້ດູ່ຕົບ ມີບໍລິມາດຈຳນວນ : 100,961 ( ໜຶ່ງຮ້ອຍຈຸດເກົ້າຫົກໜຶ່ງ ) ແມັດກ້ອນ.
- ໄມ້ປະດົງຕົບ ມີບໍລິມາດຈຳນວນ : 1,598 ( ໜຶ່ງຈຸດຫ້າເກົ້າແປດ ) ແມັດກ້ອນ. ລາຍລະອຽດແຕ່ລະບັນຊີດັ່ງນີ້ :

1. ບັນຊີເລກທີ 08/ຫກປມ, ລົງວັນທີ 15/11/2017 ຈຳນວນ 248 ຕົບ, ບໍລິມາດ 10,284 ແມັດກ້ອນ ( ໄມ້ດູ່ຕົບ ) ຢູ່ຫ້ອງການກະສິກຳ ແລະປ່າໄມ້ເມືອງສະໜາມໄຊ.

2. ບັນຊີເລກທີ 11/ຫກປມ, ລົງວັນທີ 13/03/2018 ຈຳນວນ 396 ຕົບ, ບໍລິມາດ 28,374 ແມັດກ້ອນ ( ໄມ້ດູ່ຕົບ ) ຢູ່ຫ້ອງການກະສິກຳ ແລະປ່າໄມ້ເມືອງສະໜາມໄຊ.

3. ບັນຊີເລກທີ 129/ຫກປມ, ລົງວັນທີ 08/05/2018 ຈຳນວນ 1.556 ຕົບ, ບໍລິມາດ 27,314 ແມັດກ້ອນ ( ໄມ້ດູ່ຕົບ ) ຢູ່ກອງກວດກາປ່າໄມ້ແຂວງ.

4. ບັນຊີເລກທີ 130/ຫກປມ, ລົງວັນທີ 08/05/2018 ຈຳນວນ 390 ຕົບ, ບໍລິມາດ 22,522 ແມັດກ້ອນ ( ໄມ້ດູ່ຕົບ ) ຢູ່ກອງກວດກາປ່າໄມ້ແຂວງ.

5. ບັນຊີເລກທີ 131/ຫກປມ, ລົງວັນທີ 08/05/2018 ຈຳນວນ 297 ຕົ້ນ, ບໍລິມາດ 9,432 ແມັດກ້ອນ ( ໄມ້ດູ່ຕົ້ນ ) ຢູ່ກອງກວດກາປ່າໄມ້ແຂວງ.

6. ບັນຊີເລກທີ 132/ຫກປມ, ລົງວັນທີ 08/05/2018 ຈຳນວນ 261 ຕົ້ນ/ແຜ່ນ, ບໍລິມາດ 4,633 ແມັດກ້ອນ ( ໄມ້ດູ່ 127 ຕົ້ນ/ແຜ່ນ = 3,035 ມ3 ແລະໄມ້ປະດົງ 134 ຕົ້ນ/ແຜ່ນ = 1,598 ມ3 ) ຢູ່ກອງກວດກາປ່າໄມ້ແຂວງ.

II. ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຍຶດຂອງແຂວງ.

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ ( ໃຫ້ສຳເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງສຳເລັດຮູບໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.

2. ຕ້ອງສາມາດຜະລິດເປັນຜະລິດຕະພັນສຳເລັດຮູບ ຕາມຂໍ້ຕົກລົງ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ( ສະບັບປັບປຸງ ) ສະບັບເລກທີ 0002/ອຄ.ກຂອ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.

3. ເງື່ອນໄຂຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອຳນວຍການ ຫຼື ຕົວແທນ ຂອງໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.

4. ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.

5. ຕ້ອງແມ່ນໂຮງງານປຸງແຕ່ງໄມ້ ທີ່ບໍ່ມີໜີ້ສິນ ຄ່າພັນທະອາກອນ ຕ່າງໆກັບລັດ.

6. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ.

III. ວັນເວລາເປີດເປີດຂາຍຊອງປະມູນ.

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື ( ຂະແໜງການນຳເຂົ້າ ແລະ ສົ່ງອອກ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ 15 ວັນລັດຖະການ ( ນັບແຕ່ວັນທີ 20 ສິງຫາ ຫາ 07 ກັນຍາ 2018 ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ 10 ກັນຍາ 2018.
- ສະຖານທີ່ : ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.
- ລາຄາຊອງປະມູນ : 1.000.000 ກີບ/ຊອງ ( ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ ).
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າຂອງວັນທີ 10 ກັນຍາ 2018, ຈຶ່ງໃຫ້ມາມອບສົ່ງນຳຄະນະກຳມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື, ຖ້າກາຍຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກຳນົດເວລາ ຂ້າງເທິງດ້ວຍ.

ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.
( ຄະນະກຳມະການປະມູນຂາຍໄມ້ຂັ້ນແຂວງ )

ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ອັດຕະປື

ຄຳວັນ ຈັນທະໂຄດ
Khamvan CHANTHAKHOT

ຕິດຕໍ່ພົວພັນ:

- ທ່ານ ພະທັດໄຊ 020 2229 2298
- ທ່ານ ນາງຄານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 5553 4456